ຖິ່ນຕາຂາວ

# ລາວສິວິໄລ

ພັຍຂອງຊາດ

ໂດຍ

ລາວສິວິໄລ

ຈັດພິມໂດຍ

ຄນະຕະກູນລາວ

໑໙໔໔

# ຖິ່ນຕາຂາວ

# ລາວສີວິໄລ

## ພັຍຂອງຊາດ

ໂດຍ

ລາວສີວິໄລ

ຈັດພິມໂດຍ

ຄນະຕະກູບລາວ

ພິມເທື່ອທີນຶ່ງ ໑໐໐໐ ເຫລັ້ມ

໑໙໕໕

(ກ)

## ຄຳນຳຜູ້ຂຽນ

ເຣື່ອງຖິ່ນຕາຂາວລາວສີວິໄລນີ້ ຂ້າພະເຈົ້າໄດ້ຮີບໂຮມ ແລະນຳໜິມເຜີຍແຜ່ທາງໜັງສືພິມມາແລ້ວ ຫາກແຕ່ ຂາດທຶນຊັບ ບໍ່ສາມາດຈະພິມເປັນເຫລັ້ມອອກຈຳໜ່າຍ ຕາມຄຳຮຽກຮ້ອງຂອງຜູ້ອ່ານໄດ້

ຄນະຕະກູນລາວ ຊຶ່ງມີວັດຖຸປະສົງໃນການທີ່ຈະສົ່ງ ເສີມວັນນະກັມຂອງລາວໄດ້ແຈ້ງຄວາມປະສົງກັບຂ້າພະເຈົ້າ ວ່າ ປາກຈະຈັດພິມອອກຈຳໜ່າຍ ໃນງານບຸນສລອງ ພຣະທາດຫລວງ ປີ ໑໙໕໕ ນີ້ ຂ້າພະເຈົ້າຈຶ່ງຂໍສະແດງ ຄວາມຂອບໃຈ ແລະຄວາມປາຖນາດີຕໍ່ຄນະຕະກູນລາວ ທີ່ໄດ້ຈັດພິມໃຫ້ເປັນເຫລັ້ມ ດັ່ງທີ່ທ່ານນັກອ່ານໄດ້ເຫັນຢູ່ນີ້ ຈຶ່ງຫວັງວ່າໜັງສືເຣື່ອງຖິ່ນຕາຂາວລາວສີວິໄລນີ້ ຄົງຈະ ນຳປະໂຍດມາສູ່ຜູ້ອ່ານຕາມສົມຄວນ.

ວຽງຈັນ, ວັນທີ ໑໖ ຕຸລາ ໑໙໕໕

໑໑
ລາວສີວິໄລ

# ຄຳນຳຂອງຄນະຈັດພິມ

ປຶ້ມຖຶບຕາຂາວລາວສີວິໄລ ເປັນປຶ້ມທີ່ຂຽນຂຶ້ນຈາກຄວາມພາກພຽນພຍາຍາມ ຂອງຜູ້ໃຊ້ນາມຕົວເອງວ່າ ລາວສີວິໄລ, ຄນະຕະກູນລາວອັນມີອຸດົມຄະຕິ ມຸ້ງໃສ່ພື້ນຟູອັກສອນສາດພາສາຊາດ ເຫັນມີຄວາມຈຳເປັນອັນຫລວງຫລາຍຈຶ່ງໄດ້ຈັດພິມອອກຈຳຫນ່າຍ ໂດຍການໃຫ້ອະນຸຍາດຈາກຜູ້ຂຽນຢ່າງຮຽບຮ້ອຍແລ້ວ.

ການຈັດພິມປຶ້ມຖຶບຕາຂາວລາວສີວິໄລໃນເທື່ອນີ້ ຂອງຄນະຕະກູນລາວ ນອກຈາກຈະຄິດພຽງແຕ່ປາກສົ່ງເສີມອັກສອນສາດລາວ ຫລືຂຍາຍວົງການພິມປຶ້ມພາສາລາວອອກໃຫ້ກວ້າງຂວາງແລ້ວ ຍັງມຸ້ງຈຸດໄປສູ່ການທົດລອງຫາສຽງອຸ້ມຊູຈາກເພື່ອນຮ່ວມຊາດຕໍ່ກິຈການພິມປຶ້ມ ເຊິ່ງຄນະຕະກູນລາວໄດ້ຕັ້ງຫລັກຫມັ້ນໄວ້ວ່າ ນັບແຕ່ເວລານີ້ເປັນຕົ້ນໄປທາງຄນະຈະໄດ້ລົງມືພິມປຶ້ມເປັນຕົວອັກສອນລາວ ອອກຢ່າງຫນ້ອຍກໍ່ເດືອນລະປຶ້ມ ເພື່ອຈຳຫນ່າຍແລະເພື່ອເຮັດແນວໃດ ໃຫ້ພໍກັບຄວາມປາກອ່ານຂອງຄົນລາວ.

ຢ່າງໃດກໍດີ ເມື່ອຄວາມຫວັງແລະຫລັກຫມັ້ນຂອງ

ຄນະໄດ້ວາງໄວ້ແລ້ວ ປື້ມຖຶງຕາຂາວ ລາວສີວິໄລ ອັນເປັນປື້ມນ້ອຍ ໆ ທີທ່ານຖືອ່ານຢູ່ນີ້ ຈະເວົ້າໄປເຖິງເຫດການຕ່າງ ໆ ນານາກໍຕາມ ທາງຄນະກໍບໍ່ໄດ້ແບຄວາມປະສົງໄປຫັ້ນ ພຽງແຕ່ສ້າງຄວາມຄິດໃນການຟື້ນຟູອັກສອນສາດໃຫ້ຜາກົດເປັນຈິງທ່ນັ້ນ.

ຈຶ່ງຫວັງຢ່າງຍ່ໃຈວ່າ ເພື່ອນຮ່ວມຊາດຄົງຈະແນມເຫັນຄວາມປາຖນາດີຂອງຄນະ ແລະຫວັງເພື່ອຟື້ນຟູອັກສອນສາດຮ່ວມກັນດ້ວຍ.

ວຽງຈັນ, ວັນທີ ໑ ພຶສຈິກາ ໒໕໐໗

ຕາງໜ້າຄນະ

ພຸມີ ແສນຄຳພອນ

# ຖິ່ນຕາຂາວ

ຖິ່ນຕາຂາວ ລາວສີວິໄລ ນີ້ ແມ່ນໃຜເປັນຜູ້ທວາຍໄວ້ ? ແລະທວາຍໄວ້ແຕ່ປາງໃດ ? ດງວນີ້ແມ່ນປາງຖິ່ນຕາຂາວ ເຮົາປະຊາຊົນລາວ ຈະປະຕິບັດກັບຢ່າງໃດ ?

ຖິ່ນຕາຂາວ ລາວສີວິໄລ ຫລືທີ່ເອີ້ນວ່າ ຄຳທວາຍສິບບຸກນັ້ນ ແມ່ນຄຳທວາຍຂອງສົມເດັດພຸດທາຈານ (ໂຕ) ວັດຣະຄັງແຂວງທົນບຸຣີ (ຈັງຫວັດທົນບຸຣີ) ປະເທດໄທໄດ້ທວາຍໄວ້ຕັ້ງແຕ່ປາງລາວຫລົ້ມສູນເສັຽເອກຣາດ ສົມເດັດພຸດທາຈານເປັນພຣະຊັ້ນສົມເດັດ ເຊິ່ງສຳເຣັດຊານຊັ້ນສູງສາມາດຫລີງເຫັນ ຫລືເບິ່ງເຫັນເຫດການຕ່າງ ໆ ທັງຫລາຍໃນອະນາຄົດໄດ້.

ສົມເດັດພຸດທາຈານ ໄດ້ທວາຍເຫດການທີ່ກ່ຽວກັບອະນາຄົດຂອງບ້ານເມືອງຄືກຸງເທບ(າບງກອກ)ໄວ້ລ່ວງໜ້າ ປັດຈຸບັນນີ້ເອີ້ນກັນວ່າຄຳທວາຍສິບບຸກ ຫລື ຖິ່ນຕາ

ຂາວ ລາວສີວິໄລ ເຊິ່ງເຫດການທີ່ຜ່ານມານັ້ນໄດ້ເປັນຄວາມຈິງຕາມຄຳທວາຍທຸກປະການ ຄຳທວາຍນີ້ສົມເດັດພຣະພຸດທາຈານ ໄດ້ທວາຍໄວ້ແຕ່ບານໃດນັ້ນບໍ່ມີຜູ້ຮູ້ ຕໍ່ເມື່ອພຣະພຸດທາຈານມໍຣະນະພາບ (ຕາຍ) ແລ້ວ ລູກສິດກົ້ນກຸດຕີໄດ້ໄປເກັບມ້ຽນກວາດຫ້ອງແລະບ່ອນນອນ ຈິ່ງໄດ້ເຫັນຄຳທວາຍນີ້ ຂຽນດ້ວຍລາຍມືຂອງສົມເດັດເອງຢູ່ໃຕ້ຫມອນ.

ສົມເດັດພຣະພຸດທາຈານ (ໂຕ) ເກີດເມື່ອວັນພະຫັດ ເດືອນ ៥ ຂຶ້ນ ໑໔ ຄໍ່າ ປີວອກ ຈຸລສັກຣາດ ໑໑໕໐ ກົງກັບວັນທີ ໑໗ ເມສາ ພຸທສັກຣາດ ໒໓໓໑ ໃນສມັຍແຜ່ນດິນພຣະພຸທຍອດຟ້າຣັຊກາລທີ ໑ ແຫ່ງກຸງຣັດນະໂກສິນ (ກຸງເທບ ຫລື ບາກອກ) ແລະໄດ້ມໍຣະນະພາບ (ຕາຍ)ເມື່ອວັນທີ ໒໒ ມິຖຸນາ ພຸທສັກຣາດ ໒໔໑໕ ກົງກັບວັນເສົາແຮມ ໒ ຄໍ່າ ເດືອນ ໗ ນັບເປັນເວລາລ່ວງມາແລ້ວ ເຖິງປັດຈຸບັນນີ້ໄດ້ ៨໔ ປີ (ພ.ສ. ໒໕໐໘).

ຄຳທວາຍສິບບຸກນັ້ນ ຕົ້ນສະບັບເດີມຈະຂຽນເປັນຢ່າງໃດນັ້ນບໍ່ຮູ້ ຂ້າພະເຈົ້າຜູ້ຮຽບໂຮມກໍ່ບໍ່ໄດ້ເຄີຍເຫັນຕົ້ນສະບັບເດີມ ທີ່ຂຽນດ້ວຍລາຍມືຂອງສົມເດັດພຸດທາຈານໂຕເລີຍ ເຫັນແຕ່ທີ່ໄດ້ພິມຖ່າຍທອດກັນມາ ຫລືເປັນຄຳບອກເລົ່າຕໍ່ ໆ ກັນມາວ່າ:-

໑. ມະຫາກາບ

໒. ນບາບັກ (ພານບັກ)

໓. ຣັກນິດ

໔. ສນິດຫັນ

໕. ຈ່າແຂນຂາດ (ຈານແຂນຂາດ)

໖. ຣາຊໂຈນ

໗. ຊິນຮ້ອງທຸກ (ນອນທັບທຸກ)

໘. ບຸກຫນີນ

໙. ຖີ່ນຕາຂາວ (ຖີ່ນກາຂາວ)

໑໐. ລາວສີວິໄລ (ຊາວສີວິໄລ)

ໃນຫນັງສືພຣະເຄື່ອງຄາຖາ ຂອງ ປ໋. ພິສນາຄະ ໄດ້ຂຽນຄຳຫວານສິບບຸກໄວ້ດັ່ງນີ້ຄື:—

໑. ມະຫາກາບ

໒. ພານບັກ

໓. ຣັກນິດ

໔. ສນິດຫັນ

໕. ຈ່າແຂນຂາດ

໖. ຣາຊໂຈນ

໗. ຊົບຮ້ອງທຸກ
໘. ບຸກຫມົບ
໙. ດິບດາຂາວ
໑໐. ຊາວສີວິໄລ

## ບຸກທີ ໑ ມະຫາການ

ບຸກທີ ໑ ຄືສມັບຣັຊການທີ ໑ ແຫ່ງກຸງຣັຕນະໂກສິນ ຄ່າວ່າມະຫາການມີຄວາມຫມາຍດັ່ງນີ້: ມະຫາ, ຫມາຍຄວາມວ່າບິ່ງໃຫ່ງ, ໃຫ່ງຫລາຍ, ກົງກັບພາສາອັງກິດວ່າ (**THE GREAT**) ການ: ແປວ່າເວລາ, ໂຮມກັນແລ້ວເປັນ ມະຫາການ ຫມາຍຄວາມວ່າ ເວລາມີອຳນາດຫລາຍ ຫລືສມັບທີ່ມີອຳນາດບິ່ງໃຫ່ງ ເຊິ່ງກົງກັບສມັບແຜ່ນດິນຣັຊການທີ ໑ ແຫ່ງກຸງຣັຕນະໂກສິນ (ບາງກອກ) ອັນເປັນບຸກທີ່ຊົບຊາດອ້າຍລາວ ຫລືໄທລາວໄດ້ໂຮມກັນເປັນປຶກແຜ່ນ (ບຸກ ແປວ່າ ສມັບ, ຄັ້ງ, ປາງ.)

ໃນສມັບທີ ໑ ແຫ່ງກຸງຣັຕນະໂກສິນ ເປັນບຸກທີ່ໄທລາວໄດ້ມີອຳນາດບິ່ງໃຫ່ງ ແລະໂຮມກັນເປັນປຶກແຜ່ນແຫນ້ນຫນາຄືທາງເຫນືອເອີ້ນວ່າ ໄທເຫນືອຫລືໄທລ້ານນາ

(ລາວຊຽງໃຫມ່ລ້ານນາປະເທດ) ທາງຕາເວັນອອກ ເຊິ່ງບັດນີ້ເອີ້ນວ່າ ໄທລາວ (ລາວວຽງ, ລ້ານຊ້າງປະເທດ) ທາງກາງເຊິ່ງດຽວນີ້ເອີ້ນວ່າ ໄທ (ໄທສຍາມ) ໄດ້ທ້ອນໂຮມກັນເຂົ້າເປັນອັນນຶ່ງອັນດຽວກັນເອີ້ນວ່າ ອານາຈັກສຍາມ ເຊິ່ງໄທລາວທັງຫມົດເປັນເຈົ້າຂອງປະເທດໂຮມກັນ ຄວາມຍິ່ງໃຫ່ຍຄວາມມີອຳນາດຂອງໄທລາວ ປາງອານາຈັກສຍາມນັ້ນໄທລາວໄດ້ມີຄວາມຍິ່ງໃຫ່ຍ ສົມກັບຄຳວ່າມະຫາການຢ່າງແທ້ຈິງ ອານາຈັກສຍາມຂອງຊົນຊາດໄທລາວໃນປາງນັ້ນໄດ້ມີອານາເຂດກວ້າງໃຫ່ຍໄພສານຄື:

ທາງທິດເຫນືອ ຮອດດິນແດນສິບສອງປັນນາລື້ຕິດມົນທົນຍູນານຂອງຈີນ ມີອານາເຂດໄດ້ເມືອງຊຽງຮຸ່ງແສນຫວີ ຊຽງຕຸງ ກໍໂຮມໄດ້ດິນແດນສິບສອງປັນນາລື້ຮອດແດນພະມ້າ ແລະແດນຈີນ.

ທາງທິດຕາເວັນອອກ ຮອດດິນແດນສິບສອງເຈົ້າໄທ ຕົວພັນທັງຫ້າທັງຫົກ ໂຮມທັງປະເທດລ້ານຊ້າງທັງຫມົດ ແລະປະເທດຂເມນຕິດຕໍ່ກັບແດນແກວ ພູເຂົາບັນທັດບ່ອນໄມ້ລົ້ມແບ່ງແດນແກວ.

ທາງທິດໃຕ້ ຮອດເມືອງກະລັນຕັນ ຕັງການູ ແລະ

ໄຊບະບຸຣີ ໃນປະເທດມະລາຢາປັດຈຸບັນ.

ທາງທິດຕາເວັນຕົກ ຮອດເມືອງນະລົດບາວສີ ເມືອງ ທະວາຍ ໃນດິນແດນປະເທດພະມ້າປັດຈຸບັນນີ້.

ເຫັນໄດ້ວ່າຍຸກທີ ໑ ຄືຍຸກມະຫາການ ເປັນຍຸກທີ່ ຊົນຊາດອ້າຍລາວ (ໄທລາວ) ມີຄວາມຈເຣີນ ມີອຳນາດ ຢ່າງໃຫ່ຍຫລວງ ສົມກັບຄຳຫວາຍຢ່າງແທ້ຈິງ.

ຖ້າຫາກວ່າຊົນຊາດໄທລາວໃນສມັຍນັ້ນ ມີການ ສຶກສາດີ ເຂົ້າໃຈດີວ່າເຮົາໄທລາວນັ້ນ ແມ່ນຊົນຊາດດຽວກັນ ອ້າຍນ້ອງກັນ ຮັກແພງກັນ ແລະບໍ່ດູຖູກກຽດຊັງກັນແລ້ວ ອາດຈະດຳຣົງຫລືຮັກສາຄວາມເປັນໃຫ່ຍ ຄວາມບົ່ງໃຫ່ຍມາ ໄດ້ຈົນເຖິງປັດຈຸບັນນີ້.

ຍຸກມະຫາການ ເປັນຍຸກທີ່ຊົນຊາດໄທລາວ ໄດ້ ທ້ອນໂຮມກັນເປັນປຶກແຜ່ນ ເຊັ່ນດຽວກັນກັບໄທລາວປາງ ອານາຈັກນ່ານເຈົ້າ ຫລືອານາຈັກຫນອງແສ ແຕ່ຫາກວ່າ ການໂຮມກັນຂອງຊາດໄທລາວໃນປາງນັ້ນ ເປັນການໂຮມ ກັນໂດຍອຳນາດ ຄືໂຮມກັນໂດຍການເສິກສົງຄາມ ບໍ່ແມ່ນ ໂຮມກັນດ້ວຍການສຶກສາໃຫ້ຮູ້ວ່າ ໄທລາວນັ້ນແມ່ນຊົນຊາດ ດຽວກັນ ມີເລືອດເນື້ອເຊື້ອໄຂມາແຕ່ບ່ອນດຽວກັນ ເພາະ

ການໂຮມກັນດ້ວຍການເສິກສົງຄາມນີ້ ຝ່າຍທີ່ໄດ້ໄຊຊນະ ຫລືຝ່າຍທີ່ແພ້ ກໍ່ກວາດຕ້ອນເອົາຝ່າຍທີ່ປຣາໄຊໄປເປັນ ຊະເລີຍ ແລະໄດ້ດູຫມິ່ນດູແຄນພວກທີ່ປຣາໄຊນັ້ນດ້ວຍປະ ການຕ່າງ ໆ ຕລອດຈົນກວາດຕ້ອນຊັບສິນ ແລະທຳລາຍ ມ້າງເພບ້ານເມືອງຂອງຝ່າຍທີ່ຝ່າຍຫລືປຣາໄຊນັ້ນ ໃຫ້ພິ ນາດຈົນຫາຍຫລົ້ມຈົມໄປ ຈຶ່ງເປັນເຫດໃຫ້ຄວາມມີອຳນາດ ຫລືຄວາມເປັນໃຫຍ່ ແລະການໂຮມກັນໃນປາງນັ້ນຢູ່ບໍ່ໄດ້ ນານ ຕໍ່ມາໄທລາວຈຶ່ງໄດ້ແຕກແຍກກະຈາຍກັນໄປອີກ ເພາະເຫດການຂອງບ້ານເມືອງ ປັດຈຸບັນນີ້ຈຶ່ງໄດ້ເກີດເປັນ ຊາດໄທແລະຊາດລາວ ແລະອານາຈັກລ້ານນາບາງສ່ວນ ຊຶ່ງເອີ້ນວ່າ ໄທໃຫຍ່ ໄທລື້ ໄທເຂີນ ໄດ້ເອົາຕົວໄປໂຮມເຂົ້າ ກັບປະເທດພະມ້າ ແລະປະເທດຈີນ ໄທດຳ ໄທແດງ ໄທ ຂາວ ໃນດິນແດນສິບສອງຈຸໄທ ຫົວພັນທັງຫົກ ກໍ່ໄດ້ໄປໂຮມ ເຂົ້າກັບປະເທດແກວເຫນືອໃນປັດຈຸບັນນີ້.

ທັງນີ້ກໍ່ເພາະເຫດວ່າ ໄທລາວບໍ່ໄດ້ໂຮມກັນດ້ວຍ ການສຶກສາອົບຮົມໃຫ້ຮູ້ວ່າຊົນຊາດໄທລາວນັ້ນ ແມ່ນຄົນເຊື້ອ ຊາດດຽວກັນ ຫລືເປັນພວກດຽວກັນ ຕ້ອງຮັກແພງເຫັນອົກ ເຫັນໃຈກັນ ຢ່າງຖານອ້າຍຖານນ້ອງ (ພຣາດອນພາບ)

# ຍຸກທີ ໒ ມານຍັກ ຫລື ພານຍັກ

ຄຳວ່າມານະ ເປັນພາສາບາລີ-ສັນສກິດ ແປວ່າ ມີໃຈຫຍາບຊ້າຊົ່ວຊາມ ໃຈໂຫດສາມານ, ຄຳວ່າພານ ແປວ່າ ຊົ່ວຮ້າຍ ເປັນຄົນບໍ່ດີ, ຄຳວ່າຍັກ: ຫມາຍເອົາມະນຸດພວກນຶ່ງມີຮ່າງກາຍໃຫຍ່ໂຕ ເປັນຕາຢ້ານກົວ ຕາມພື້ນແຜ່ນບອກວ່າ ຍັກມີແຂ້ວບັກແງໂງ້ງອອກມາຈາກປາກສອງເບື້ອງ ມັກກິນມະນຸດແລະສັດເປັນອາຫານ ມານຍັກຫລືພານຍັກ ຈຶ່ງຫມາຍເຖິງຄວາມໂຫດຮ້າຍທາລຸນ ຍຸກມານຍັກຫລືພານຍັກນີ້ ກົງກັບຣັຊການທີ ໒ ແຫ່ງກຸງຣັດນະໂກສິນ ສມັຍນີ້ແມ່ນສມັຍທີ່ມີການລົງໂທດທັນຜູ້ເຮັດຜິດໂດຍການຕອກຂມັບທັບເລັບ ຜູ້ທີ່ຖືກກ່າວຟ້ອງຈະຕ້ອງນຳມາທໍຣະມານໂດຍການຕອກຂມັບທັບເລັບ ເພື່ອໃຫ້ຮັບສາຣະພາບຜິດ ສມັຍນີ້ຍ່ອມມີການລົງໂທດໂດຍການເຜົາທັງເປັນ ຂ້າທາດຈະໄດ້ຮັບການທໍຣະມານ ຫລືປະຫານຊີວິດ ຜູ້ເປັນນາຍກໍ່ສາມາດເຮັດໄດ້ ທາດບໍ່ມີສິດເສຣີໃນການທີ່ຈະຮ້ອງຂໍຄວາມຊ່ວຍເຫລືອຈາກຜູ້ໃດ ແມ່ນແຕ່ກົດຫມາຍກໍ່ຄຸ້ມຄອງຊີວິດທາດໃນປາງນັ້ນບໍ່ໄດ້ ຊີວິດຂອງຄົນທີ່ຕົກເປັນທາດໃນປາງນັ້ນ ຈຶ່ງທໍ່ກັບຊີວິດຂອງສັດ.

ບຸນນີ້ຈຶ່ງໄດ້ເອີ້ນວ່າ ບຸນນາງນັກ ຫລືພາງນັກ ຄືບຸນແຫ່ງຄວາມໂຫດຮ້າຍ.

## ບຸນທີ ປີ ຣັກມິດ

ບຸນຣັກມິດ ກົງກັບສມັຍຣັຊການທີ ປີ ແຫ່ງກຸງເທບ ບຸນນີ້ແມ່ນສມັຍທີ່ແຜ່ນດິນສຍາມເຣີ່ມຣັກມິດ ຜູກມິດຄົບຫາສມາຄົມກັບຊາວຕ່າງປະເທດທັງຢູໂຣບ ແລະ ອະເມຣິກາ.

ສມັຍນີ້ແມ່ນແຜ່ນດິນສຍາມ ທຳສົນທິສັນຍາກັບຊາວຕ່າງປະເທດຄືຢູໂຣບແລະອະເມຣິກາ ຊາວອະເມຣິກາຊື່ໝໍບັດເລ່ໄດ້ນຳສີລປະວິທຍາສມັຍໃຫມ່ມາເຜີຍແຜ່ໃຫ້ຄົນໄທລາວ ຊາວອະເມຣິກາໄດ້ເຣີ່ມຣູ້ຈັກກັບຊາວໄທລາວ ແລະຣູ້ຈັກຄົບຄ້າສມາຄົມກັນໃນສມັຍຣັຊການທີ ປີ ນີ້ ນອກຈາກນີ້ແລ້ວ ຣັຊການທີ ປີ ຍັງໄດ້ສ້າງສາຍສັມພັນທໄມຕຣີກັບນານາຊາດ ອັນເປັນປະເທດທີ່ມີຄວາມກ້າວໜ້າໄປແລ້ວຢ່າງບໍ່ເລືອກໜ້າ ຈຶ່ງເອີ້ນບຸນນີ້ວ່າເປັນບຸນຣັກມິດ ຫລືບຸນຜູກມິດກັບນານາປະເທດທົ່ວໂລກ.

## ບຸກທີ ໔ ສບິດຫັນ

ບຸກສບິດຫັນກົງກັບຣັຊການທີ ໔ ແຫ່ງສມັຍບາງກອກ ເປັນບຸກທີ່ພຣະພຸທສາສນາຣຸ່ງເຮືອງ ພຣະທັມຄໍາສັ່ງສອນຂອງພຣະສັມມາສັມພຸທເຈົ້າ ໄດ້ຊາບຊຶມເຂົ້າສູ່ຈິດໃຈປວງຊົນໃນທົ່ວທຸກຖິ່ນຖານບ້ານຊ່ອງ ຈຶ່ງເຮັດໃຫ້ພຣະເຈົ້າແຜ່ນດິນຣັຊການທີ ໔ ໄດ້ຊົງຜນວດບວດເປັນພິກຂຸໃນພຣະບວຣສາສນາທາບໍາເພັນພິດ ແລ້ວກໍເປັນສມັຍທີ່ມີທັມມະຍຸດນິກາຍໄດ້ເກີດຂຶ້ນໃນສາສນາ ຊົງຂນານນາມພວກພິກຂຸຣຸ່ນກ່ອນນັ້ນວ່າ ມະຫານິກາຍ.

ເມື່ອສົ້ນການບໍາເພັນພິດແລ້ວ ກໍຊົງລາເພດຈາກບັນພະຊິດກັບເຂົ້າຄອງຣາຊສົມບັດ ໃນຣັຊການແຜ່ນດິນທີ ໔ ນີ້ ໄດ້ຈເຣີນໄປດ້ວຍສິລທັມແລະຄວາມຮູ້ຄວາມຫລັກປ່າງຫລວງຫລາຍທັ້ງພາສາຊາດແລະພາສາອັງກິດ ຈຶ່ງເອີ້ນວ່າບຸກສບິດຫັນ.

## ບຸກທີ ໕ ຈໍາແຂນຂາດ (ຈານແຂນຂາດ)

ບຸກຈໍາແຂນຂາດ ຫລືຈານແຂນຂາດນີ້ ກົງກັບ

ສມັຍຣັຊການທີ ໕ ຂອງກຸງເທບ ເປັນສມັຍທີ່ປະເທດມະ
ຫາອຳນາດຂອງໂລກພວມຊອກສແວງຫາເມືອງຂຶ້ນ ພວກ
ອັງກິດແລະຝຣັ່ງເສສໄດ້ພຍາຍາມທຸກວິທີທາງ ທີ່ຈະເອົາ
ເມືອງສຍາມໄປເປັນເມືອງຂຶ້ນ ແຕ່ພຣະເຈົ້າແຜ່ນດິນສຍາມ
ຊົງມີສາຍຕາຍາວແລະເບິ່ງການໄກ ຍອມເສັຽສລະຮ່າງກາຍ
ສ່ວນເລັກສ່ວນນ້ອຍ ເພື່ອແລກກັບຊີວິດຄືເອກຣາດໄວ້ ຄື
ຍອມເສັຽດິນແດນທາງຝັ່ງຊ້າຍແມ່ນ້ຳຂອງ ຄືສ່ວນທີ່ເປັນ
ປະເທດລາວບັດນີ້ໃຫ້ແກ່ຝຣັ່ງເສດ ແລະຍອມເສັຽແຄວ້ນ
ໄຊຍະບຸຣີ ກະລັນຕັນ ຕັງການູ ແລະດອນຫມາກ ເມືອງມະ
ລິດ ທະວາຍ ຕະນາວສີ ໃຫ້ແກ່ອັງກິດ.

ຈຶ່ງໄດ້ເອີ້ນວ່າ ຍຸກຈ່າແຂນຂາດ ຫລືຈ່ານະແຂນ
ຂາດ ຄືຖືກຝຣັ່ງເສດ ອັງກິດ (ຈານ) ຟັນເອົາຈົນແຂນຂາດ
ຫລືເສັຽດິນແດນສຍາມໄປ ອັນປຽບໄດ້ດັ່ງເສັຽແຂນທັງສອງ
ຂ້າງ ຈຶ່ງເວົ້າວ່າ ຈານແຂນຂາດຫລືຈ່າແຂນຂາດ.

## ຍຸກທີ ໖ ຣາຊໂຈນ

ຍຸກຣາຊໂຈນ ກົງກັບຣັຊການທີ ໖ ເປັນສມັຍທີ່
ບ້ານເມືອງເຕັມໄປດ້ວຍບັດຖາບັນດາສັກ ມີການໃຊ້ຈ່າຍເງິນ

ຖ້າແຜ່ນດິນຢ່າງຟູມເຟືອຍ ມີການເກັບພາສີຈາກຣາສດອນ ເພີ້ມຂື້ນ ສະຖານະການດ້ານເສດຖະກິດຕົກຕ່ຳ ໃພ່ຟ້າຂ້າແຜ່ນດິນເດືອດຮ້ອນ ຈຶ່ງໄດ້ເອີ້ນບຸນນີ້ວ່າຣາຊໂຈນ ຫລືເວົ້າງ່າຍ ໆ ກໍ່ຄືໂຈນຫລວງນັ້ນເອງ.

## ບຸນທີ ໗ ຊົນຮ້ອງທຸກ ຫລືບອນທົນທຸກ

ບຸນຊົນຮ້ອງທຸກຫລືບອນທົນທຸກ ກົງກັບຣັຊການທີ ໗ ແຫ່ງແຜ່ນດິນກຸງບາງກອກ (ກຸງເທບ)ບ້ານເມືອງເກີດຣະສ່ຳຣະສາຍ ເນື່ອງຈາກການເສດຖະກິດຕົກຕ່ຳ ປະຊາຊົນເລີ້ມມີສິດມີສຽງຕໍ່ສູ້ຮຽກຮ້ອງເອົາສິດເສຣີພາບ ຈົນເຖິງເກີດມີການປະຕິວັດຂື້ນ ປ່ຽນແປງການປົກຄອງຈາກຣະບອບຣາຊາທິປະໄຕມາເປັນປະຊາທິປະໄຕ ຄືການຈັດຣະບອບປົກຄອງໂດຍປະຊາຊົນແລະເພື່ອປະຊາຊົນ ຣັຊການທີ ໗ ຕ້ອງຊົງສລະຣາຊສົມບັດຫນີໄປຢູ່ຕ່າງປະເທດ ຈຶ່ງເອີ້ນວ່າບຸນຊົນຮ້ອງທຸກ ຫລືບອນທົນທຸກ.

## ບຸນທີ ໘ ຫມິນ

ບຸນຫມິນກົງກັບຣັຊການທີ ໘ ແຫ່ງກຸງເທບຫລື

ບາງກອກ ເປັນຍຸກທີ່ບ້ານເມືອງຫັນເຂົ້າຫາຄວາມມືດມົນ ເກີດເສິກສົງຄາມ (ສົງຄາມໂລກຄັ້ງທີສອງ) ປະຊາຊົນ ພົລເມືອງໄດ້ຮັບຄວາມທຸກຍາກລຳບາກ ເກີດການສໍ້ຣາດ ບັງຫລວງ ນັກການເມືອງເປັນນັກກິນເມືອງ ນັກໂກງເມືອງ ເກີດການຂ້າຟັນກັນຢ່າງໂຫດຮ້າຍທາລຸນ ມີການບົງຄຸ້ມຂ້າ ຄຸ້ມ ເຊິ່ງບໍ່ມີສມັຍໃດຈະໂຫດຮ້າຍທໍ່ຍຸກນີ້ ແມ່ນແຕ່ອົງ ພຣະບາດສົມເດັດພຣະເຈົ້າມະຫາຊີວິດຣັຊການທີ ໗ ເຊິ່ງ ເປັນທີ່ໂຄຣົບສັກກາຣະຂອງປວງຊົນ ກໍ່ຍັງຖືກລອບປົງພຣະ ຊົນ ຈົ່ງເອີ້ນວ່າຍຸກທມິນ ຄືຍຸກແຫ່ງການບົງຄຸ້ມຂ້າຄຸ້ມ ຫລືຍຸກແຫ່ງຄວາມໂຫດຮ້າຍປ່າເຖື່ອນ.

## ຍຸກທີ ໔ ຄົນຕາຂາວຫລືຄົນກາຂາວ

ຍຸກຄົນຕາຂາວຫລືຄົນກາຂາວ ກົງກັບຣັຊການ ທີ ໔ ແຫ່ງກຸງເທບ ຄືກົງກັບເວລາປັດຈຸບັນນີ້ ຍຸກນີ້ແມ່ນ ຍຸກແຫ່ງຊົນຊາດຜິວຂາວ ຫລືເອີ້ນວ່າພວກຫນັງຂາວ ຫລື ພວກຕາບ້ຳເຂົ້າ (ພວກຕາຂາວ ພວກກາຂາວ) ເຊິ່ງໄດ້ແກ່ ພວກຊາດຕາເວັນຕົກ ພວກນີ້ໄດ້ເອົາໃຈໃສ່ເປັນພິເສດຕໍ່ ຄວາມກ້າວຫນ້າ ຄວາມລ້າຫລັງ ອັນບັນດານມາຈາກ

24/VII

ຄວາມຂາດແຄນ ແລະຂາດຄວາມສາມາດຂອງຊາວລາວ -ໄທ ທີ່ຈະພັທນາດິນເອງໃຫ້ສີວິໄລຂຶ້ນ ໃນຍຸກນີ້ແມ່ນຍຸກ ທີ່ລາວ-ໄທ ໄດ້ເດັ້ນແລ່ນບຸກຄວາມສັມພັນອັນສັນນິດກັບ ພວກຫນັງຂາວ ເພື່ອຫາຄວາມກ້າວຫນ້າໃສ່ໂຕ (ຊາດ ລາວ-ໄທ) ຈຶ່ງເປັນຍຸກທີ່ຊາວຫນັງຂາວໄດ້ທຸ່ມເທການ ຊ່ອຍເຫລືອມາບໍ່ຫນ້ອຍ ນຳຄວາມຈເຣີນກ້າວຫນ້າມາສູ່ ນຳຫລັກສີລປະວິທຍາການຕ່າງ ໆ ອັນເຫັນວ່າເປັນປໂຍດ ມາສູ່ດິນແດນແຫລມອິນດູຈີນ (ລາວ-ໄທ).

ປັດຈຸບັນ ແມ່ນສມັຍທີ່ພວກຫນັງຂາວ ຫລືຍຸກ ຂອງອົງການໂລກເຂົ້າມາຊົດຊ່ອຍ ເຊັ່ນດັ່ງອົງການອາຫານ (ເອບ ໂອ ເອ) ອົງການເດັກນ້ອຍ ແລະອົງການເຄື່ອນແມ່ ນ້ຳຂອງ ອັນໄດ້ແກ່ ລາວ-ໄທ-ຂເມນ ແລະວຽດນາມໃຕ້

ຍຸກປັດຈຸບັນ ນີ້ພວກຕາຂາວໄດ້ຊ່ອຍເປັນຄຣູອາ ຈານສອນໃນມະຫາວິທລາລັຍ ວິທຍາລັຍແລະສະຖາບັນ ອື່ນ ໆ ໃນລາວແລະໄທເປັນຈຳນວນຫລວງຫລາຍ ພວກ ລາວ-ໄທ ໄດ້ມີໂອກາດສຶກສາຮ່ຳຮຽນເອົາວິຊາຄວາມຮູ້ ທັງ ໃນປະເທດດິນເອງແລະນອກປະເທດ ໂດຍທຶນຂອງຣັດຫລື ທຶນສ່ວນອົງການ

ພນັກງານຂອງຣັດລາວ-ໄທ ໄດ້ຜັດປ່ຽນກັນອອກເດີນທາງໄປຕ່າງປະເທດ ເພື່ອເຊື່ອມສັມພັນທາງດ້ານເສດກິດ, ການຄັງ, ການປົກຄອງ, ແລະແລກປ່ຽນແນວຄວາມຄິດ ເພື່ອຫລີກພົ້ນຈາກຄວາມລ້າຫລັງຂອງປະເທດ.

ປັດຈຸບັນນີ້ ລາວ-ໄທ ຈະພາກັນແນມເຫັນຄວາມໂຫດຮ້າຍ ອັນບັນດານມາຈາກຄວາມມັກໂລບໂລພາ ຂອງເຫລົ່າຈັກພັດນິຍົມແຜ່ນດິນ ຫລືພວກຖືລັດທິນິຍົມວັດຖຸອັນເຄີຍມີຮ່ອງຮອຍໃນປະວັດສາດມາແລ້ວ ສມັຍໄທລາວຄອງຫນອງແສ (ເຈັກແກວແຊກແຊງ).

## ພຣະຣາຊອານາຈັກລາວປັດຈຸບັນ

ຍ້ອນຊາດລາວເປັນທີ່ມີກຳເນີດເກີດມາຈາກຄວາມເປັນດົນຕໍ່ຂອງຕະກູນໄທລາວໃນປາງດຶກດຳບັນ ເປັນຊາດເກົ່າແກ່ມາໄດ້ຫ້າພັນກວ່າປີ ມີການຫມູນຕົວມາເປັນຊາດເອກຣາດບໍ່ຈັກວ່າທີ່ໃດເທື່ອ ແຕ່ຍ້ອນສ້ຽບຫານການໂລບມາກຂອງມວນມະນຸດຜູ້ມີກຳລັງເຫນືອກວ່າ ໄດ້ແກ້ງທຳລາຍ ຈຶ່ງເຮັດໃຫ້ລາວເຮົາຕ້ອງກາຍເປັນຊາດລ້າຫລັງ ໃນບານໂລກເຂົາກ້າວຫນ້າ ຄ່າຫວາຍຂອງສົມເດັດພຸທາ

ຈາກເປັນຄຳກວາບກ່ຽວກັບລາວ - ໄທ ຫລືໄທລາວປາງກ່ອນນີ້ ໗໐ ກວ່າປີຫລືເກືອບເຕັມສັດວັດ ໄດ້ມີຄວາມຈິງ ແລະມີຄວາມສັມພັນເຖິງເຫດການຂອງລາວ ອັນເປັນໜ້າງົດຄວນເກັບມາຄຶດພິຈາຣະນາໃຫ້ຄັກດີ.

ເຫດການປັດຈຸບັນຂອງລາວ ໄດ້ເຮັ່ງຮ້ອງຂ້ອນຮອນໄປສູ່ຄວາມຫາບະນະ ອັນບັງດານມາຈາກສົງຄາມແຊກແຊງລາວ ຂອງຜູ້ມີກຳລັງພົນມາກໃນພາກອາຊີສຽງໃຕ້ ຕ້ອງການປາກແຜ່ລັດທິວັດຖຸນິຍົມເຂົ້າສູ່ດິນລາວ ເຮັດໃຫ້ລາວໝົດເອກຣາດໄປອີກ ເໝືອນໃນປາງກ່ອນ ໆ ທີ່ເຂົາເຄີຍເຮັດມາ ແລະພ້ອມດຽວກັນຄວາມກ້າວໜ້າຂອງລາວ ອັນເກີດມີຂຶ້ນຈາກການເອົາໃຈໃສ່ຂອງມວນມະນຸດໃນໂລກທີ່ເຫັນໃຈລາວ ຊ່ອຍເຫລືອລາວ ແລະຄ້ຳປະກັນສິດເສຣີພາບໃຫ້ແກ່ລາວ ຈຶ່ງກາຍເກີດເປັນປະຕູອອກໃນທາງການເມືອງແບບດີຂຶ້ນແກ່ລາວ ລາວເປັນກາງ ມີສັນຍາຄ້ຳປະກັນໄວ້ຢ່າງຄົບຖ້ວນ.

ພວກໜັງຂາວຫລືພວກຕາຂາວ ທີ່ບົ່ງໄວ້ໃນຄຳທວາຍນັ້ນ ຈຶ່ງຖືກກັບລາວໃນສມັຍປັດຈຸບັນ ອັນມີການຊ່ອຍເຫລືອຈາກຝລັ່ງ ອັງກິດ ອະເມຣິກາ ແລະຊາດອື່ນ ໆ

ອັນເປັນຊາວຫນັງຂາວ ທີ່ໄດ້ພ້ອມພາກັນຄ້ຳປະກັນສັນຍາ ກ່ຽວກັບລາວວ່າດ້ວຍຄວາມເປັນກາງ ແລະລາວກໍ່ບູທ່າງ ສ້າງສາຍສັມພັນກັບຊາວຕາຂາວເຫລົ່ານີ້ ຢ່າງສນິໃຈແລະ ຕາມໃຈນັກ,

ປະຕູອອກຂອງລາວໃນການເລືອກໄດ້ ທາງເດີນ ອັນເປັນກາງ ເພື່ອເວັ້ນຈາກພັຍສົງຄາມ ເວັ້ນຈາກການ ແຊກແຊງຈາກສອງກຸ່ມລັດທິການເມືອງນັ້ນ ລາວຂອງເຮົາ ໄດ້ຮັບການເຫັນໃຈຈາກຊາວໂລກ ເກືອບຫມົດທຸກປະເທດ ແລະໄດ້ພໍ່ໃຈໃຫ້ການຊ່ອຍເຫລືອໃນດ້ານການຄັງ ເສຖກິດ ການສຶກສາ ແລະການສ້າງສາພັທນາ ເພື່ອກ້າວໄປສູ່ຄວາມ ກ້າວຫນ້າເປັນຢ່າງດີ ຂນະດຽວກັນລາວເຮົາພາຍຫລັງຈາກ ໄດ້ຮັບເຄາະຮ້າຍຈາກພັຍຮຸກຮານ ອັນເປັນປະວັດການມາ ຕັ້ງແຕ່ຕົ້ນຕະກູນເທົ້າຜອງຮອດດຽວນີ້ນັ້ນ ແມ່ນສ້າງຄວາມ ເຈັບແຄ້ນແລະແຂ້ງແກ່ນໃນນ້ຳໃຈ ຕໍ່ສູ້ເດັດດ່ຽວໃຫ້ແກ່ລາວ ຕົ້ນຕະກູນລາວ ຈຶ່ງໄດ້ສາມາດຊອກຫາແກ້ຕົວແລະດົ້ນຣົນ ຈົນມີທາງອອກມາເລື້ອຍ ໆ ທຸກບຸກທຸກສມັຍ ແລະໃນດຽວ ນີ້ອີກ ອັນເປັນໂອກາດທີ່ລາວພວມຊອກຄວາມກ້າວຫນ້າ ໃສ່ຕົວ ປະວັດສາດຂອງລາວກັວປົ່ນໄປຄືນຫລັງ ຫັນຮູບ

ມາໃຫ້ເຫັນຮອບແຊກຊືມແບບເກົ່າຈາກເຈັກແກວ ຜູ້ເຄີຍ
ສ້າງເຄາະເຂັນໃຫ້ລາວມາແລ້ວອີກເທື່ອນຶ່ງ ແລ້ວລາວທັງ
ປະເທດກໍ່ເຫັນຄັກພ້ອມກັນວ່າ ແຜ່ນດິນລ້ານຊ້າງທີ່ລາວ
ຄອງປູ່ຢ່າງມີອຳນາດ ອະທິປະໄຕຄົບຖ້ວນນີ້ ຖືກເຈົ້າອຳ
ນາດມື້ເກົ່າຊວງມາບົບຄັ້ນອີກແລ້ວ ນ້ຳໃຈນັກຣົບອັນແຂງ
ແກ່ນ ຈາກບົດຮຽນເກົ່າຂອງຂຸນພົນຜູ້ລືນາມໃນປາງກ່ອນ
ກໍ່ແລ່ນເຂົ້າມາຕ້ອນຮັບກັບເຫດການ ແຜ່ນດິນອານາຈັກ
ລາວຈຶ່ງກາຍເກີດມີສົງຄາມປ້ອງກັນຕົວ ສູ້ຄືນກັບແຜນແຊກ
ແຊງນັ້ນຢ່າງບໍ່ລົດລະ ແຕ່ທ່າທີຂອງໂລກຜູ້ວາງໃຈໃຫ້ລາວ
ເດີນເປັນກາງ ເມື່ອເຫັນເຫດຮ້າຍເຫລົ່ານີ້ເກີດຂຶ້ນ ມາຂັດ
ຂວາງຄວາມກ້າວໜ້າຂອງລາວ ພວມຈະເດີນໄປແລ້ວນີ້
ກໍ່ພາກັນໃປ້ລຸກສົ້ງແບນຢ່າງບໍ່ໄດ້ເພີໃຈ ການສົ້ງແບນເບິ່ງ
ຂອງມວນຊົນທັງໂລກ ບໍ່ແມ່ນພຽງແຕ່ຈະເຫັນຄັກໃນຕົວ
ແຊກແຊງປັດຈຸບັນນີ້ທີ່ນັ້ນ ແມ່ນເປັນການແບນເຫັນເຖິງ
ເບື້ອງຫລັງຂອງການຊວງມີນາ ເພື່ອບິດເອົາລາວ-ໄທ ໃນ
ປາງກ່ອນສມັຍຫ້າພັນປີ ແລະສມັຍຫລຸດ ໆ ກັນມາ ຈົນ
ເທົ້າພອງຮອດດຽວນີ້.

ປະວັດສາດລາວ-ໄທ ໄດ້ຂຽນເປັນບົດຮຽນໃນການ

ແຊກແຊງຂອງເຈັກແກວຕັ້ງແຕ່ສມັຍດົນຕະກູກລາວ ຈົນເທົ້າພອງມີການແບກຕົວເປັນລາວ-ໄທ ແລະເທົ້າພອງຮອດດຽວນີ້ ຈຶ່ງບໍ່ມີບ່ອນໃດຈະສົງສັຍວ່າ ສົງຄາມໃນລາວບໍ່ແມ່ນເກີດຈາກເຈັກແກວແຊກແຊງ.

ພຶດຕິການທີ່ເປັນມາຢ່າງທີ່ເຫັນຢູ່ນີ້ ຈຶ່ງເປັນສະພາບການຂ້າມທະວີບອາຊີຂອງລາວ ໄປສູ່ຄວາມສັມພັນສັນນິດກັບຊາວຕາຂາວ ຫລືຊາວໜັງຂາວຫລາຍຂຶ້ນ ສະພາບສັນນິດ ອັນບັນດານມາຈາກເຄາະກັມຂອງລາວໃນດຽວນີ້ ໄດ້ເຮັດໃຫ້ຄຳທວາຍໃນບຸກທີ ໗ ຄືບຸກຖຶບຕາຂາວ ຫລືຖຶບກາຂາວ ເກີດເປັນຄວາມຈິງຂຶ້ນໃນແຜ່ນດິນລາວ-ໄທ ຫລືແຜ່ນດິນແຫລມອິນດູຈີນ ແລ້ວກໍ່ບໍ່ໜີຈາກສາຍຕາທີ່ພວກເຮົາພວມເຫັນຢູ່ດຽວນີ້ ພວກໜັງຂາວ ຫລືເອີ້ນອີກວ່າພວກຕາຂາວທັງໝົດ ໄດ້ພາກັນສົ່ງແຜນເບິ່ງເຫດການໃນລາວກໍຄືໃນແຫລມອິນດູຈີນ ແບບເປັນປັນຫາທີ່ສຸດ ແລະເຮົາອາດແບກການສົ່ງແຜນນັ້ນໄດ້ເປັນສອງຢ່າງຄື:

– ເພື່ອສະກັດກັ້ນ ຫລືຄ້ຳປະກັນຄວາມໝັ້ນຄົງຂອງຊາດລາວ ກໍຄືຄ້ຳປະກັນຄວາມເປັນກາງ ແລະເຫລົ່າຊາດໃນແຫລມອິນດູຈີນ ບໍ່ໃຫ້ດົກຢູ່ພາຍໃຕ້ການແຊກແຊງ

ຫລືພົ້ນຈາກການແຊກແຊງຂອງເຈົ້າແກວ (ພວກແດງ).

– ເພື່ອຊ່ອຍເຫລືອໃນທຸກ ໆ ດ້ານ ອັນບໍ່ມີສັນຍາຜູກຮັດກັນ ເຮັດໃຫ້ລາວຫລືຊາດໃນທຸກປະເທດ ທີ່ອາສັຍຢູ່ໃນແຜ່ນດິນແຫລມອິນດູຈີນ ພົ້ນຈາກຄວາມລ້າຫລັງກ້າວໄປສູ່ຄວາມເປັນຕົວຂອງຕົວເອງ.

# ໑໑
# ລາວສີວິໄລ

## ຍຸກທີ ໑໐ ລາວສີວິໄລ ຫລື ຊາວສີວິໄລ

ຖັດຈາກຍຸກຖີນຕາຂາວ ຫລືຖີນກາຂາວໄປແລ້ວ ກໍແມ່ນຍຸກລາວສີວິໄລຫລືຊາວສີວິໄລ ໃນຍຸກນີ້ທ່ານສົມເດັດພຸດທາຈານໄດ້ຄາດຄະເນໄວ້ເປັນປີວ່າ ໃຫ້ນັບພາຍຫລັງຈາກນີ້ທວາຍນັ້ນມາມີຈຳນວນ ໑໐໐ ປີເຕັມ ຫລືທີ່ກັບນຶ່ງສັຕວັດ ເຊິ່ງດຽວນີ້ກໍ່ານົດອາຍຸຄຳທວາຍໄວ້ໄດ້ ໗໔ ປີແລ້ວ ແລະກໍ່ພວມຢູ່ໃນຍຸກຖີນຕາຂາວ ຫລືຖີນກາຂາວພໍດີ.

ຈາກເຫດຜົນອັນເປັນມາຂອງເຫດການບ້ານເມືອງທີ່ອາດຄະເນໄດ້ກັບຄຳທວາຍ ແລະກໍ່ສືດ ໆ ມາເລື້ອຍ ໆ ນັ້ນ ຊາດລາວຂອງເຮົາຈະເຮັດແນວໃດຕໍ່ໄປ ເພື່ອຫມູນຕົວໄປສູ່ຄວາມສີວິໄລຫລືສູ່ຍຸກສີວິໄລ ໃນໂອກາດຈະມາເຖິງນີ້.

## ສະເພາະພຣະຣາຊອານາຈັກລາວ

ເຫດການທັງຫມົດໃນພາກການກະທຳ, ແນວຄວາມຄິດ ແລະພຶດຕິການທຸກຢ່າງໃນປັດຈຸບັນ ແມ່ນ

ໝາຍເຖິງເສັ້ນທາງເດີນໄປສູ່ທາງສອງເສັ້ນຄື ຄວາມສີວິໄລ ແລະຄວາມລ້າຫລັງໃນອະນາຄົດ ໄດ້ຄວາມວ່າ ຫາກໃນປັດຈຸບັນ ເຮົາສາມາດເອົາຕົວລອດຕາມຮ່ອງຮອຍຂອງກົດໝາຍບ້ານເມືອງ ຫລືຕາມບາດບົດສັນຍາອັນມີຢູ່ຂອງລາວໃນປັດຈຸບັນ ເຄັ່ງຄັດຕໍ່ຫລັກປະຕິບັດ ອັນຈະມີຜົນກ້າວໜ້າໃຫ້ແກ່ຊາດ ຜ່ອນເບົາຄວາມໂລບມາກໂລພາໃນທາງສ່ວນຕົວລົງ ແລະຮ່ວມກັນສ້າງນານະໃຈໃນທາງອັນຈະນຳພາຊາດໄປສູ່ປະຕູອອກທີ່ລາວພາກັນເລືອກໄວ້ແລ້ວ (ຄວາມເປັນກາງ) ເຫລົ່ານີ້ກໍ່ອີງໃສ່ຫລາຍບັນຫາຄື;

– ບັນຫາປອງດອງຊາດ

– ບັນຫາເອົາຕົວລອດຈາກການແຊກແຊງ

– ບັນຫາພັດນາເສດຖກິດ ການຄັງ ແລະການສົ່ງເສີມນ້ຳໃຈຊາດນິຍົມ

ເຫລົ່ານີ້ທັງໝົດ ອະນາຄົດແຫ່ງຄວາມສີວິໄລຈຶ່ງຈະເກີດມີໄດ້ແກ່ລາວຂອງເຮົາ ແລະລາວກໍ່ຈະຊື່ວ່າເປັນຊາວສີວິໄລ ຫລືເປັນລາວສີວິໄລໄດ້.

ຫາກບັງເອີນເຫດການທັງໝົດ ໃນພາກການກະທຳ ແນວຄວາມຄິດ ແລະພຶດຕິການທຸກຢ່າງໃນປັດຈຸບັນ

ໄດ້ເລັ່ງໄປຫາຈຸດແຫ່ງຄວາມແຕກແຍກກັນ ບໍ່ສາມັກຄີ ປອງດອງກັນ ແລະບໍ່ມີການພັທນາຕົວໃນທາງດ້ານໃດ ໆ ຫມົດແລ້ວ ອະນາຄົດໃນທາງລ້າຫລັງຈະກາຍມາເປັນຂອງລາວອີກ ຄວາມສລາຍຕົວຂອງລາວຈະຫັນມາຄອງຫົວໃຈທີ່ແສນເຈັບແສນຊ້ຳຄືນບໍ່ຫນ້ອຍ.

ສະນັ້ນ ໃນຕອນຫລັງແຫ່ງຄຳຫວາຍຂອງສົມເດັດພຸດທາຈານນີ້ ຂ້າພະເຈົ້າຈຶ່ງແນະສເນີທ່ານດ້ວຍພັບຂອງຊາດອີກ ອັນມີຂໍ້ຄວາມຫມາຍເຖິງບົດຮຽນທາງປະວັດສາດຂອງລາວທັງໃນອະດີດ ປັດຈຸບັນ ແລະອະນາຄົດ.

---

24/7
ຫ້າມຈຳໜ່າຍ

# ພັຍຂອງຊາດ

## ພັຍຂອງຊາດທີ່ໄທລາວຄວນເບິ່ງໃຫ້ດີ

ບ່ອນເປັນທັມມະດາຢູ່ວ່າ ສິ່ງໃດມີເກີດສິ່ງນັ້ນມີແກ່ ມີຕາຍຫລືສູນສລາຍໄປໃນພາຍຫລັງ ການສູນໄປໃນວັດຖູສິ່ງຂອງ ສົມບັດພັສດານ ແລະຊີວິດອິນຊີຂອງແຕ່ລະຄົນແຕ່ລະຕົວສັດນັ້ນ ກໍຍັງຖືໄດ້ວ່າເປັນເຣື່ອງແນ່ນອນຢູ່ແລ້ວ ແລະກະບໍ່ເປັນຕາຫນ້າຢ້ານ ຫນ້າວິຕົກເກີນຂອບເຂດປານໃດ,

ແຕ່ຖ້າການສູນເສັຽຊາດ ສູນເສັຽແຜ່ນດິນ ມັນບໍ່ແມ່ນຈະຖືໄດ້ວ່າເປັນເຣື່ອງທັມມະດາ ມັນບ່ອນຫມາຍເຖິງການສູນເສັຽອຳນາດອະທິປະໄຕ ແລະແສນຊ້ຳຫົວໃຈໄປຕລອດການອັນຍາວນານ.

ຈຶ່ງສົມຄວນທີ່ຜູ້ຂຽນ ຈະສເນີທ່ານດ້ວຍພັຍຂອງຊາດ ດັ່ງທີ່ທ່ານຈະໄດ້ເຫັນນະບັດນີ້:

### ໑. ການເກີດຂອງຊາດໄທລາວເທື່ອທີ່ນຶ່ງ

ໄທລາວເປັນຊາດໃຫ່ຍ ເປັນຊາດເກົ່າແກ່ບູຮານ

ມີອາຍຸນັບເຖິງປັດຈຸບັນໄດ້ປະມານ ໕໐໐໐ ປີປາຍ ຄືເກີດກ່ອນ ພ.ສ. ໓໐໐໐ ປີປາຍ ມີນະຄອນລຸງ, ນະຄອນປາ, ນະຄອນງ້ຽວ ເປັນເມືອງຫລວງ ການເກີດເທື່ອທີນຶ່ງ ມີອາຍຸໄດ້ປະມານ ໓໐໐໐ ປີປາຍ ກໍເສັຽອິສຣະພາບໃຫ້ແກ່ຈີນ (ເຈັກ) ເຊິ່ງເປັນປະເທດເພື່ອນບ້ານ ເມື່ອປະມານ ພ.ສ. ໓໐໐ ປີປາຍ ຄືໄທລາວຕາຍເທື່ອທີນຶ່ງ.

## ໒. ການເກີດຂອງຊາດໄທລາວເທື່ອທີສອງ

ໄທລາວຕາຍແລ້ວເກີດມາອີກ ເມື່ອປະມານ ພ.ສ. ໔໒໐ ປີປາຍ ເອີ້ນວ່າອານາຈັກແຖງຫລືອາຍລາວ ມີນະຄອນເພງານຫລືຜາໃບເປັນນະຄອນຫລວງ ການເກີດເທື່ອທີສອງຂອງໄທລາວນັ້ນ ມີອາຍຸໄດ້ພຽງ ໒໐໐ ປີປາຍກໍເສັຽອິສຣະພາບໃຫ້ແກ່ຈີນປະເທດເພື່ອນບ້ານອີກ ຄືເກີດເທື່ອທີສອງມີອາຍຸໄດ້ພຽງ ໒໐໐ ປີປາຍ ກໍຕ້ອງຕາຍອີກ.

## ໓. ການເກີດຂອງຊາດໄທລາວເທື່ອທີສາມ

ໄທລາວຕາຍເທື່ອທີສອງແລ້ວເກີດມາອີກ ເມື່ອປະມານ ພ.ສ. ໗໐໐ ປີປາຍ ການເກີດເທື່ອທີສາມນີ້ຕ້ອງ

ລົ້ມລຸກຄຸກຄານ ແຍກຍ້າຍກັນປຸ່ເປັນບ້ານເລັກບ້ານນ້ອຍ ເອີ້ນວ່າ "ຣັດອິສຣະຫົກນະຄອນ" ຈົນເຖິງ ພ.ສ. ໑໒໐໐ ຈຶ່ງທ້ອນໂຮມກັນເປັນປຶກແຜ່ນ ເອີ້ນວ່າ "ອານາຈັກໜອງແສ" ມີນະຄອນໜອງແສເປັນຣາຊທານີ ແລະມີອາຍຸໄດ້ ໑໐໐໐ ປີປາຍ ກໍ່ເສັຽອິສຣະພາບໃຫ້ແກ່ຈີນປະເທດເພື່ອນບ້ານອີກ ເມື່ອປະມານ ພ.ສ. ໑໗໐໐ ປີປາຍ ຄືຕາບໄປອີກເປັນເທື່ອທີສາມ.

## ໔. ການເກີດຂອງຊາດໄທລາວເທື່ອທີ່ສີ່

ການເກີດເທື່ອທີສີ່ຂອງໄທລາວ ແຍກອອກເປັນສອງຊາດຄື ໄທແລະລາວ ເມື່ອປະມານ ພ.ສ. ໑໗໐໐ ປີປາຍຄື;

໑. ໄທໄດ້ສ້າງອານາຈັກສຸໂຂໄທ, ກຸງສີອະຍຸທຍາ, ກຸງທົນບຸຣີ, ແລະກຸງເທບມະຫານະຄອນ ເຊິ່ງປັດຈຸບັນເອີ້ນວ່າ "ໄທ" ເປັນປະເທດໄທ "ຊາດໄທ"

໒. ລາວສ້າງອານາຈັກລ້ານຊ້າງລ້ານນາ ມີນະຄອນຊຽງແສນ ຊຽງໃໝ່ ຫລວງພຣະບາງ ວຽງຈັນ ແລະ

ນະຄອນຈໍາປາສັກ ເຊິ່ງປັດຈຸບັນເອີ້ນວ່າ "ລາວ": ເປັນປະເທດລາວ "ຊາດລາວ"

ການເກີດເທື່ອທີ່ສີ່ໄທລາວມີອາຍຸໄດ້ປະມານ ໗໐໐ ປີປາຍ ຕລອດເວລາ ໗໐໐ ປີປາຍທີ່ຜ່ານມານີ້ ໄທລາວໄດ້ຮັບເຊື້ອພຍາດຮ້າຍ ເຊິ່ງເຄີຍເກາະກິນແລະທໍາລາຍຊາດຂອງເຮົາໃຫ້ຕາຍໄປເທື່ອລະເລັກລະນ້ອຍນັ້ນແມ່ນຫຍັງ ?.

## ໑. ຊາດໄທລາວເກີດແລະຕາຍເທື່ອທີ່ນຶ່ງ

ຊົນຊາດໄທລາວ ໄດ້ອົພຍົບລົງມາຕັ້ງຫລັກແຫລ່ງບ່ອນທໍາມາຫາກິນ ໃນດິນແດນທີ່ເປັນປະເທດຈີນບັດນີ້ ເມື່ອກ່ອນ ພ.ສ. ປະມານ ໓໐໐໐ ປີປາຍ ມີນະຄອນລຸງ, ນະຄອນປາ, ແລະນະຄອນງ້ຽວ ເປັນຣາຊທານີ (ເມືອງຫລວງ) ແລະຂນະນັ້ນ ຊາດຈີນຍັງເປັນຊາດພະເນຈອນ ຫາກິນໃນທາງລ້ຽງສັດ ຕ້ອງອົພຍົບຮ່ອນເຮ່ໄປມາຢູ່ສເມີ ໄດ້ອົພຍົບເຂົ້າມາໃນທະວີບອາຊີ ເມື່ອປະມານກ່ອນ ພ.ສ. ໒໓໐໐ ປີປາຍ ເຊິ່ງປາງນັ້ນຊົນຊາດໄທລາວຕັ້ງຕົວເປັນປຶກແຜ່ນເປັນຫລັກແຫລ່ງ ມີຣະບຽບການປົກຄອງຈເຣີນຮຸ່ງເຮືອງຢູ່ແລ້ວ

ເມື່ອຈີນ (ເຈັກ) ໄດ້ພົບກັບໄທລາວນັ້ນ ໄດ້ເຫັນ

ຊາດໄທລາວເປັນຊາດທີ່ຈະເຣີນຮຸ່ງເຮືອງແລ້ວ ແລະພວກໄທລາວຖືວ່າພວກຕົນມີເຊື້ອສາຍກຳເນີດມາຈາກ "ດາວ" ເຊິ່ງຢູ່ເທິງສວັນຊັ້ນຟ້າ ຈຶ່ງໄດ້ເອີ້ນພວກຕົນວ່າ "ດາວ" ເພາະສມັຍນັ້ນຍັງບໍ່ມີເຊື້ອຊາດເອີ້ນກັນ ໃຜເປັນພວກໃດກໍເອີ້ນຕາມຊື່ຂອງພວກນັ້ນ ເຊັ່ນພວກບັກ ພວກຕາດ, ພວກດາວ. ຯລຯ ຈີນ (ເຈັກ) ເຫັນພວກດາວຄືພວກໄທລາວ ເປັນພວກທີ່ຈະເຣີນຮຸ່ງເຮືອງ ມີຣະບຽບການປົກຄອງມີວັທນະທັມສູງແລ້ວ ຈຶ່ງໄດ້ຍົກຍໍໃຫ້ກຽດນັບຖືວ່າເປັນອ້າຍ ຫລືວ່າເປັນໃຫຍ່ຈຶ່ງໄດ້ເອີ້ນວ່າ "ອ້າຍດາວ" ແຕ່ເຈັກເວົ້າສຽງ "ດ" ບໍ່ຊັດ ຈຶ່ງພ້ຽນໄປເປັນ "ອ້າຍລາວ" ໄປເສັຽ.

ໄທລາວເປັນຊາດທີ່ມີໃຈເພື່ອແຜ່ ເມດຕາ ກະຣຸນາ ໃຫ້ຄວາມອຸປະກາຣະຊ່ອຍເຫລືອແກ່ເຈັກຕາມອັດຕະພາບ ເຊັ່ນດຽວກັນກັບໄທລາວ ຍອມໃຫ້ເຈັກອົພຍົບຈາກພື້ນແຜ່ນດິນຈີນ ແລ້ວເຂົ້າມາເພິ່ງພາອາສັຍພຣະບໍຣົມໂພທິສົມພານຂອງພຣະເຈົ້າມະຫາຊີວິດໄທລາວໃນປັດຈຸບັນນີ້ ເຈັກເປັນຊາດທີ່ມີຫົວຄິດປັນຍາ ແລະເອົາປຽບແກ່ໄທລາວເຊິ່ງເປັນຄົນຊື່ ຄອຍແຊກຊຶມບາດແຍ່ງເອົາບ່ອນທຳມາຫາກິນ ບາດຄ້າບາດຂາຍ (ບາດຊື້ບາດຂາຍ) ໄປຈາກໄທລາວ ໃນ

ນະຄອນລຸງໄປເທື່ອລະນ້ອຍ ໆ ຊົ່ວເວລາພຽງຮ້ອຍປີກໍເຂັ້ມແຂງຂຶ້ນ ປະກອບກັບໄດ້ເຈົ້າຊີວິດທີ່ເຂັ້ມແຂງ ສາມາດແຜ່ອຳນາດແຊກຊຶມເຂົ້າມາໃນນະຄອນລຸງ, ນະຄອນປາ.

ໃນຊົ່ວເວລາປະມານພັນປີ ເຈັກກໍສາມາດແຊກຊຶມບາດເອົາອານາຈັກລຸງແລະອານາຈັກປາ (ນະຄອນລຸງນະຄອນປາຂອງໄທລາວໄປໄດ້) ເມື່ອປະມານກ່ອນ ພ.ສ.໔໐໐ ປີປາຍ ການທີ່ຈີນໃຊ້ວິທີການແຊກຊຶມແຊກແຊງ ບາດຊື້ບາດຂາດກັບໄທລາວ ໃນສມັຍນະຄອນລຸງນະຄອນປານັ້ນກໍເພາະວ່າ ເຈັກບັງບໍ່ມີຄວາມສາມາດເຂັ້ມແຂງພໍທີ່ຈະຕໍ່ສູ້ກັບໄທລາວທາງອາວຸດໄດ້ ຖ້າເຈັກສາມາດເຂັ້ມແຂງແລ້ວເຈັກຈະບໍ່ໃຊ້ເວລາແຊກຊຶມບາດແບ່ງໃຫ້ເສັຽເວລາເລີຍ ເຊັ່ນປາງສມັຍພຣະເຈົ້າຈີນຊີ່ຮ່ອງເຕ້ ຍົກກອງທັບໃຫຍ່ມາຕີອານາຈັກງ້ຽວຂອງໄທລາວ ເມື່ອປະມານ ພ.ສ. ໓໒໐ ປີປາຍ ໂຮມການເກີດຂອງຊາດໄທລາວເທື່ອທີ່ນຶ່ງ ມີອາຍຸໄດ້ປະມານ ໓໐໐໐ ປີປາຍ.

ພວກໄທລາວທີ່ຮັກຄວາມອິສຣະເສຣີ ກໍພາກັນຕາຊ່ອງທາງຖອຍລົງມາທາງໄຕ້ (ທາງລຸ່ມ) ຫາບ່ອນທຳມາຫາກິນໃຫມ່ ສ່ວນພວກທີ່ອົພຍົບລົງມາບໍ່ໄດ້ ເທົງ ໆ ເຂົ້າກໍຖືກຈີນກືນກິນ ແລະກາຍເປັນຈີນໄປໃນທີ່ສຸດ.

## ໖. ຊາດໄທລາວເກີດແລະຕາຍເທື່ອທີສອງ

ເມື່ອເສັຽອານາຈັກນະຄອນລຸງ, ນະຄອນປາ, ນະຄອນງ້ຽວ, ໃຫ້ແກ່ເຈັກແລ້ວ ພວກໄທລາວທີ່ຖອຍລົງມາທາງໃຕ້ ໄດ້ເຕົ້າໂຮມກັນສ້າງອານາຈັກອິສຣະຂຶ້ນອີກ ເມື່ອປະມານ ພ.ສ. ໔໖໐ ປີປາຍ ເອີ້ນວ່າ ອານາຈັກແຖນ ຫລື້ອ້າຍລາວ.

ຊົນຊາດໄທລາວປາງສ້າງອານາຈັກແຖນນີ້ ຖືກເຈັກບີບບັງຄັບແລະກົດດັນຫລາຍ ເພາະວ່າໄທລາວປາງອານາຈັກແຖນນີ້ເປັນຊາດທີ່ເກີດໃຫມ່ ແລະເປັນຊາດທີ່ບໍ່ມີອຳນາດຫລາຍ ສ່ວນເຈັກນັ້ນບັດນີ້ໄດ້ກາຍເປັນຊາດທີ່ມີອຳນາດເຂັ້ມແຂງ ມີອຳນາດຫລາຍແລ້ວ ເຈັກຈຶ່ງບໍ່ຈຳເປັນຕ້ອງໃຊ້ວິທີການແຊກແຊງ ແລະແຊກຊຶມໄທລາວໃຫ້ເສັຽເວລາ ເຈັກຫາເຫດບົກກອງທັບໃຫ່ຍມາຕີໄທລາວ ປາງອານາຈັກແຖນທັນທີ ເຫດທີ່ເຈັກບົກກອງທັບມາຕີອານາຈັກແຖນຫ.ລື້ອ້າຍລາວຂອງໄທລາວເທື່ອນີ້ກໍ່ເພາະວ່າ ເຈັກເກີດເປີດຫນ່າຍໃນລັດທິເຕົ້າ ຈຶ່ງໄດ້ຈັດສົ່ງຄນະຣາຊທູດໄປສືບພຣະພຸທສາສນາບັງຊົມພູທະວີບ (ປະເທດອິນເດັຽ) ຂໍເຕີນ

ທາງຜ່ານອານາຈັກອ້າຍລາວໄປ ແຕ່ໄທລາວບໍ່ຍອມເພາະ ຢ້ານວ່າຈະເປັນພວກສອດແນມ (ແນວທີຫ້າ) ມາສືບເບິງ ເຫດການບ້ານເມືອງຂອງອານາຈັກອ້າຍລາວ ຈີນຈຶ່ງຖືເປັນ ສາຍເຫດຍົກກອງທັບໃຫຍ່ມາຕີອານາຈັກແຖນ ໃນທີ່ສຸດ ໄທລາວປາງອານາຈັກແຖນຫລືອ້າຍລາວກໍ່ເສັຽອິສຣະພາບ ຕົກໄປເປັນເມືອງຂຶ້ນຂອງເຈັກຢູ່ປະມານ ໑໐໐ ປີປາຍ ຈຶ່ງ ໄດ້ຖືໂອກາດໃນຂນະທີ່ເຈັກເກີດການວຸ້ນວາຍ ເພາະການ ບາດແຍ່ງຣາຊສົມບັດກັນ ປະກາດຄວາມເປັນອິສຣະພາບ ຂຶ້ນມາໄດ້ອີກ ເມື່ອປະມານ ພ.ສ. ໕໐໐ ປີປາຍ.

ເມື່ອໄທລາວປາງອານາຈັກແຖນ ປະກາດຕົວເປັນ ອິສຣະແລ້ວ ເຈັກກໍ່ຫາເຫດຍົກທັບມາຕີອານາຈັກແຖນຫລື ອ້າຍລາວອີກ ເຫດທີ່ຈີນຍົກກອງທັບມາຕີອີກກໍ່ເພາະວ່າ ເຈັກໄດ້ສົງອາຊທູດ ໄປສືບພຣະພຸທສາສນາທີ່ຊົມພູທະວີບ ໄດ້ສຳເຣັດ ແລະນຳພຣະພຸທສາສນາເຂົ້າມາແຜ່ພາຍ ຈີນ ຖືວ່າຊາດໃດ, ປະເທດໃດ, ບ້ານໃດ, ເມືອງໃດ, ນັບຖື ພຣະພຸທສາສນາແລ້ວ ເປັນເມືອງຂຶ້ນຂອງຈີນຫມົດ ຄືຈີນ ຖືນະໂຍບາຍແຜ່ອຳນາດທາງພຸທສາສນາ.

ເນື່ອງຈາກໄທລາວ ປາງອານາຈັກແຖນຫລືອ້າຍ

ລາວ ໄດ້ຫັນມານັບຖືພຣະພຸທສາສນາເປັນສະຣະນະ ຈີນ ກໍຖືເອົາວ່າອານາຈັກອ້າຍລາວເປັນເມືອງຂຶ້ນຂອງຈີນ ແລະ ຈັດສົ່ງຂ້າຣາຊການມາເກັບສ່ວຍ ແລະປົກຄອງໃນອານາ ຈັກອ້າຍລາວ ແຕ່ໄທລາວບໍ່ຍອມ ເພາະໄທລາວບໍ່ໄດ້ເປັນ ເມືອງຂຶ້ນຂອງຈີນ ເສິກສົງຄາມຣະຫວ່າງໄທລາວກັບຈີນກໍ ເກີດຂຶ້ນອີກ ໃນທີ່ສຸດໄທລາວກໍເປັນຝ່າຍປຣາໄຊ ຕ້ອງສູນ ເສັຽອິສຣະພາບ ຕົກເປັນເມືອງຂຶ້ນຂອງຈີນອີກ ຄືເກີດແລ້ວ ຕາຍເປັນເທື່ອທີ່ສອງ ເມື່ອປະມານ ພ.ສ. ໓໒໐ ປີປາຍ ໃຊ້ເວລາເກີດເທື່ອທີ່ສອງໄດ້ ໒໐໐ ປີປາຍ.

## ໓. ຊາດໄທລາວເກີດແລະຕາຍເທື່ອທີ່ສາມ

ເມື່ອເສັຽອານາຈັກແຖນຫລືອ້າຍລາວໃຫ້ແກ່ເຈັກ ແລ້ວ ພວກໄທລາວທີ່ບໍ່ພໍໃຈຢູ່ໃນອຳນາດຂອງເຈັກ ກໍພາ ກັນອົພຍົບຖອຍລົງມາທາງໃຕ້ ແລະຖືເອົາໄຂກາດໃນຂນະ ທີ່ແຜ່ນດິນເຈັກເກີດການວຸ້ນວາຍ ສມັຍສາມກົກ ເມື່ອປະ ມານ ພ.ສ. ໗໐໐ ປີປາຍນັ້ນ ປະກາດຕົວເປນອິສຣະຂຶ້ນອີກ ເປັນເທື່ອທີ່ສາມ ເອີ້ນວ່າ "ອານາຈັກອິສຣະຫນົກນະຄອນ ຫລືອານາຈັກໄທລາວອິສຣະຫນົກຣັດ" ການເກີດເທື່ອທີ່ສາມ

ນີ້ ໄທລາວຕ້ອງໄດ້ຮັບຄວາມທຸກຍາກລຳບາກຫລາຍ ຕ້ອງແຍກກັນເປັນບ້ານເລັກເມືອງນ້ອຍລົ້ມລຸກຄຸກຄານ ຕໍ່ມາຈົນເຖິງປະມານ ພ.ສ. ໑໑໐໐ ປີປາຍ ກົກນະຄອນຫນອງແສເປັນກົກທີ່ມີອຳນາດຫລາຍ ສາມາດໂຮມເອົານະຄອນອື່ນໆອີກຫ້ານະຄອນ ໃຫ້ເຂົ້າມາເປັນສຫະພັນ ຫລືສຫະພາບເປັນອັນນຶ່ງອັນດຽວກັນໄດ້ ເອີ້ນວ່າສຫະຣາຊອານາຈັກຫນອງແສມີນະຄອນຫນອງແສຫລືຕາລີບຟູເປັນຣາຊທານີ.

ໄທລາວປາງອານາຈັກຫນອງແສນີ້ ເປັນໄທລາວປາງທີ່ຈເຣີນຮຸ່ງເຮືອງມີກຳລັງມະຫາສານ ໄທລາວປາງນີ້ເປັນປາງທີ່ຈເຣີນຮຸ່ງເຮືອງທີ່ສຸດ ເຄີຍເຮັດເສິກສົງຄາມກັບເຈັກປາບແພ້ເອົາໄຊຊນະແກ່ເຈັກແລະທິເບດໄດ້ ເຈັກຮົບໂຮມກອງທັບໃຫ່ຍມາຕີໄທລາວປາງຫນອງແສ ຫລາຍ ເທື່ອແຕ່ຖືກກອງທັບໄທລາວຊາວຫນອງແສ ຕີແຕກພິນາດຕ້ອງລ້າຖອຍໄປ ແລະເພື່ອເປັນການຕອບແທນໄທລາວຊາວຫນອງແສ ໄດ້ເກນພົນຍົກທັບໃຫ່ຍໄປຕີແຜ່ນດິນເຈັກ ແລະຕີໄດ້ດິນແດນເຈັກຫລາຍຫົວເມືອງ.

ເມື່ອເຈັກເຫັນໄທລາວຊາວຫນອງແສເຂັ້ມແຂງ ບໍ່ສາມາດແຜ່ອຳນາດ ການຮຸກຮານທາງອາວຸດກັບໄທລາວ

24/VII

ໄດ້ແລ້ວ ເຈັກຈຶ່ງປ່ຽນກົນຍຸດ ຫລືກົນວິທີແລະນະໂຍບາຍການແຜ່ອຳນາດທາງການເມືອງໃຫມ່ ຄືໃຊ້ວິທີການຣຸກຽບແຊກຊືມຫລືຣຸກຢ່າງສງົບ ໂດຍບໍ່ໃຫ້ເຈົ້າຂອງຮູ້ຕົວ ເຊິ່ງປັດຈຸບັນນີ້ເອີ້ນວ່າ "ສົງຄາມເຢັນຫລືສົງຄາມເສດຖກິດ" ໂດຍພຣະເຈົ້າແຜ່ນດິນເຈັກຍອມທຳສັນຍາທາງພຣະຣາຊໄມຕຣີກັບຣາຊອານາຈັກຫນອງແສ ຍອມຍົກຣາຊທິດາ (ລູກສາວ) ໃຫ້ເປັນມະເຫສີ (ເມັຽ).

ເມື່ອໄທລາວແລະເຈັກ ເປັນສັມພັນທະໄມຕຣີກັບແລະພຣະເຈົ້າມະຫາຊີວິດ ແຫ່ງຣາຊອານາຈັກຫນອງແສໄດ້ຣາຊທິດາຂອງພຣະເຈົ້າກຸງຈີນ ເປັນມະເຫສີດັ່ງນັ້ນແລ້ວນັກປາດຣາດບັນດິດຈີນປວງປະຊາຣາສດອນພໍ່ຄ້າຊາວຂາຍຈີນທັງຫລາຍ ກໍໄຫລຫລັ່ງເຂົ້າມາໃນຣາຊອານາຈັກຫນອງແສເລື້ອຍ ໆ ຊາວຈີນທັງຫລາຍກໍຄ່ອຍແຊກຊືມບາດແບ່ງເອົາການເສດຖກິດ ບ່ອນທຳນາຄ້າຂາຍ ບ່ອນທຳມາຫາກິນແລະທຳການປະສົມພັນ (ແຕ່ງດອງກັນ) ກັບຊາວຫນອງແສໄປເທື່ອລະນ້ອຍ ໆ ເລືອດໄທລາວກໍກາຍເປັນເລືອດປະສົມ (ຜະສົມ) ໄທລາວຈີນໄປ.

ໃນທີ່ສຸດ ເມື່ອຈີນເຫັນອານາຈັກຫນອງແສອ່ອນ

ແອລາວເພາະການຮຸກຮານ ແລະການແຊກຊຶມແລ້ວ ຈີນກໍ
ບີກກອງທັບໃຫ່ຍມາຕີເອົາອານາຈັກໜານອງແສ ເມື່ອປະ
ມານ ພ.ສ. ໑໗໐໐ ປີປາຍ ອານາຈັກໜານອງແສກໍສູນເສັຽ
ອິສຣະພາບ ຕົກໄປເປັນເມືອງຂຶ້ນຂອງຈີນອີກ (ເສັຽດາຍເດ
ເສັຽດາຍໜານອງແສກວ້າງເມືອງເຮົາປາງກ່ອນ ຕ້ອງມາມຸດ
ມອດມັ້ງມສູນ.ສ້ຳບໍ່ເຫລືອ) ເປັນອັນວ່າໄທລາວເກີດມາເທື່ອ
ທີສາມ ມີອາຍຸໄດ້ປະມານ ໑໐໐໐ ປີປາຍກໍຕາຍໄປອີກ.

## ສຣູບການຕາຍຂອງໄທລາວທັງສາມເທື່ອ

ຈະເຫັນໄດ້ວ່າ ການຕາຍຄືການສູນເສັຽບ້ານ.ເມືອງ
ຂອງໄທລາວທັງສາມເທື່ອນັ້ນ ເພາະເຫດຈາກເຈັກ (ຈີນ)
ປະເທດເພື່ອນບ້ານ ເຊີ່ງໃຊ້ວິທີການຮຸກຮານໄທລາວ ດັ່ງ
ຕໍ່ໄປນີ້.

໑. ໃຊ້ວິທີແຊກຊຶມ ຄືການບາດແບ່ງເອົາ
ເສຖກິດ, ບ່ອນທຳນາຫາກິນ, ບ່ອນປູ່ບ່ອນອາສັຍ ໄປຈາກ
ໄທລາວເທື່ອລະນ້ອຍ ໆ ໂດຍບໍ່ໃຫ້ເຈົ້າຂອງຮູ້ໂຕ ປຽບດັ່ງ
ກາຝາກຈັບກົກໄມ້ ໃນທີ່ສຸດຕົ້ນໄມ້ທີ່ກາຝາກຈັບນັ້ນກໍຕາຍ
ໄປ ກາຝາກຈັບປູ່ນັ້ນກໍເປັນຕົ້ນໄມ້ໃຫມ່ຂຶ້ນມາແທນ ຫລື

ຈະປຽບອີກຢ່າງນຶ່ງກໍຄືພຍາດຮ້າຍ ມີໃນເອີກ (ວັນນະໂຣກ) ເຊີ່ງຄອຍເກາະກິນ ສຸຂພາບຮ່າງກາຍ ໃປເທື່ອລະນ້ອຍ ໆ ໂດຍເຈົ້າຂອງບໍ່ຮູ້ໂຕ ຈົນໃນທີ່ສຸດກໍຕາຍໄປ.

ການແຊກຊຶມຂອງຈີນໃນປາງບູຮານນັ້ນ ປຽບແລ້ວກໍຄ້າຍກັບການແຊກຊຶມ ຂອງພວກລັດທິນິຍົມວັດຖຸເຂົ້າໄທລາວຢູ່ໃນຂນະນີ້.

໖. ໃຊ້ວິທີຮຸກຮານດ້ວຍອາວຸດ ເມື່ອໃຊ້ກົນວິທີຮຸກຮານແຊກຊຶມໃຫ້ອ່ອນແອລົງແລ້ວ ກໍຈະໃຊ້ວິທີຮຸກຮານທາງອາວຸດຕາມມາທັນທີ ເຊັ່ນຈີນຮຸກຮານໄທລາວໃນປາງສມັຍອານາຈັກໜອງແສ ແລະສມັຍນະຄອນງ້ຽວນັ້ນເປັນຕົວຢ່າງ ຫລືເມື່ອເຫັນວ່າໄທລາວອ່ອນແອແລ້ວກໍຮຸກຮານທາງອາວຸດໂດຍທັນທີ ບໍ່ຕ້ອງໃຊ້ວິທີແຊກຊຶມກ່ອນໃຫ້ເສັຽເວລາ ເຊັ່ນເຈັກຮຸກຮານໄທລາວໃນປາງອານາຈັກແຖນຫລືອາຍລາວ ສມັຍນະຄອນເພງາຍມາແລ້ວທັງສອງຄັ້ງນັ້ນເອງ.

ສຣູບແລ້ວຈຶ່ງເຫັນໄດ້ວ່າຈີນ (ເຈັກ) ຮຸກຮານໄທລາວທຸກຂນະທຸກຍາມ ຖ້າປາງໃດຍາມໃດໄທລາວເຂັ້ມແຂງເຈັກກໍໃຊ້ວິທີການຮຸກຮານງຽບຫລືແຊກຊຶມ ຖ້າໄທລາວ

ອ່ອນແລລົງບານໃດຈີນຫລືເຈັກກໍ່ໃຊ້ວິທີຣຸກຣານທາງອາວຸດ

## ໔. ການເກີດຂອງໄທລາວເທື່ອທີ່ສີ່

ເມື່ອເສັຽອານາຈັກຫນອງແສ ໃຫ້ແກ່ເຈັກແລ້ວ ພວກໄທລາວກໍ່ພາກັນອົພຍົບລົງມາທາງໃຕ້ ໂຮມກັບພວກໄທລາວທີ່ອົພຍົບລົງມາຮຸ່ນກ່ອນ ສ້າງອານາຈັກຂອງໄທລາວຂຶ້ນເປັນເທື່ອທີສີ່ໃນດິນແດນແຫລມທອງ ຫລືສຸວັນນະພູມ ເອີ້ນວ່າ "ອານາຈັກສາມລ້ານ" ຄື ລ້ານນາ, ລ້ານຊ້າງ, ລ້ານເພັຽຫລືສຍາມ.

໑. ອານາຈັກລ້ານນາ ມີນະຄອນຫລວງຢູ່ທີ່ໄຊນະບຸຣີ, ຊຽງແສນ, ນະຄອນຊຽງຮາຍແລະນະຄອນຊຽງໃຫມ່

໒. ອານາຈັກລ້ານຊ້າງ ມີນະຄອນຫລວງຢູ່ທີ່ກຸງສີສັດຕະນາຄນະຫຸດ ລ້ານຊ້າງຫົ່ມຂາວຫລວງພຣະບາງ, ລ້ານຊ້າງຫົ່ມຂາວວຽງຈັນ.

໓. ອານາຈັກລ້ານເພັຽຫລືສຍາມ ມີນະຄອນຫລວງຢູ່ທີ່ກຸງສຸໂຂໄທ, ກຸງສີອະຍຸທຍາ, ກຸງທົນບຸຣີ, ແລະກຸງເທບພຣະມະຫານະຄອນ.

ທັງສາມອານາຈັກ ຕ່າງກໍ່ເປັນຣັດບ້ານພີ່ເມືອງ

ນ້ອງຕໍ່ກັນ ອານາຈັກສຍາມຫລືລ້ານເພັງ ເຊິ່ງຈີນເອີ້ນວ່າ "ສຽນລໍ້ກົກ" ເປັນຣັດທີ່ມີຄວາມຈເຣີນຮຸ່ງເຮືອງກວ່າຣັດລ້ານນາແລະລ້ານຊ້າງ ເພາະຢູ່ໃກ້ທະເລ ຕິດຕໍ່ກັບນານາປະເທດໄດ້ສະດວກ ສາມາດໂຮມເອົາອານາຈັກລ້ານນາແລະລ້ານຊ້າງເຂົ້າເປັນສຫະຣາຊອານາຈັກອັນດຽວກັນໄດ້ ເອີ້ນວ່າ "ອານາຈັກສຍາມຫລືສຫະຣາຊອານາຈັກສຍາມ" ແຕ່ການໂຮມກັນໃນຍຸກນັ້ນ ແມ່ນການໂຮມກັນດ້ວຍການເສິກສົງຄາມ ບໍ່ໄດ້ໂຮມກັນດ້ວຍການສຶກສາ ເພາະຖືກເຫດການຂອງໂລກບັງຄັບ ຈຶ່ງໄດ້ແຕກແຍກກະຈັດກະຈາຍກັນອອກໄປອີກ ຈຶ່ງບັງຄົງເປັນອານາຈັກອິສຣະຂອງຊົນຊາດອ້າຍລາວແທ້ ໆ ກໍຄືໄທກັບລາວທຸກນັ້ນ.

ສຣຸບການເກີດຂອງໄທລາວຫລືອ້າຍລາວ ເທື່ອທີ່ສີ່ນີ້ ແຍກອອກເປັນຣັດອິສຣະສອງປະເທດຄື ປະເທດໄທແລະປະເທດລາວ ສ່ວນທີ່ບັງຄົງຕົກຄ້າງຢູ່ໃນດິນແດນຈີນຕອນໃຕ້ ກໍຕົກຢູ່ໃນອຳນາດຂອງຈີນຄອມມຸຍນິດ ເປັນຣັດນຶ່ງຂອງຈີນຄອມມຸຍນິດໄປແລ້ວ ແລະພວກຢູ່ທາງພາກເໜືອຂອງພະມ້າ ກໍເປັນຣັດນຶ່ງໂຮມຢູ່ກັບພວກພະມ້າເອີ້ນວ່າ "ຣັດໄທໃຫຍ່ຫລືສຫະຣັດໄທໃຫຍ່" ສ່ວນພວກທີ່ອົພຍົບ

ເຂົ້າມາໃນມິນທິນອັດສັມຂອງອິນເດັຍນັ້ນ ກໍ່ກາຍເປັນຊາວອິນເດັຍໄປເກືອບຫມົດແລ້ວ ເຊິ່ງປັດຈຸບັນນີ້ເອີ້ນວ່າ "ໄທອາຫົມ" ແລະພວກທີ່ຢູ່ໃນເຂດສິບສອງເຈົ້າໄທຫົວພັນທັງຫ້າທັງຫົກ ກໍ່ຖືກແກວກືນກິນຈົນເກືອບເປັນແກວໄປຫມົດແລ້ວ

ຈາກແວ່ນແຍງບານໃຫ່ຍທີ່ໄດ້ເບິ່ງມາແລ້ວນີ້ ຈະພໍເບິ່ງເຫັນແລ້ວວ່າ ພັຍຂອງຊາດໄທລາວ ຫລືພັຍອັນໃຫ່ຍຫລວງຂອງເຮົາໄທລາວທັງຫລາຍ ໃນປັດຈຸບັນນີ້ຄື:

໑. ປັດຈຸບັນຄື ການແຊກຊຶມການແຊກແຊງຂອງພວກລັດທິນິຍົມວັດຖຸ ເຊິ່ງນິເຈັກແກວເປັນຜູ້ນຳມາ.

໒. ອະນາຄົດ ຄືການສູນສລາຍຂອງຊາດ ຫລືການຕາຍຂອງຊາດໄທລາວ ເທື່ອທີສີ່.

ຈຶ່ງຂໍໃຫ້ພີ່ນ້ອງ ເພື່ອນຮ່ວມຊາດ ໄທລາວທັງຫລາຍ ພິຈາຣະນາເບິ່ງດ້ວຍສາຍຕາຂອງຕົນເອງ ໃນເຫດການ ແລະຄວາມເປັນຢູ່ໃນປັດຈຸບັນນີ້.

— ຈົບ —

# ທ່ານນັກອ່ານນັກຄົ້ນຄວ້າ ໂປຣດຊາບ

ຄນະຕະກູນລາວໄດ້ຕັ້ງຫລັກຫມັ້ນໄວ້ແລ້ວ ທີ່ຈະຈັດພິມປຶ້ມອ່ານອອກສູ່ສາຍຕາທ່ານ ແລະນັ້ນເພື່ອມຸ້ງໃສ່ຈຸດຫມັກໃນການຟື້ນຟູອັກສອນສາດພາສາຊາດ ໃຫ້ກວ້າງຂວາງອອກ

ທາງຄນະຈຶ່ງກຳນົດຈະພິມປຶ້ມອອກ ເດືອນລະນຶ່ງເທື່ອ ມີ ປະເພດສາຣະຄະດີ, ນະວະນິຍາຍ, ຫລັກວິຊາການ, ແລະນິທານເກົ່າແກ່ຂອງລາວ

ທ່ານຜູ້ສົນໃຈໂປຣດຄອນເປັນເຈົ້າຂອງ ແລະຮ່ວມຟື້ນຟູອັກສອນສາດດ້ວຍກັນ